# ພຣະບັນຍັດທີສອງ
# (ພຣະບັນຍັດຄັ້ງທີສອງ)

| | |
|---|---|
| ໃຈຄວາມສຳຄັນ | ການຈົດຈຳ ແລະ ເຊື່ອຟັງຄວາມ |
| ຂໍ້ຄວາມສຳຄັນ | ບົດ ໔:໑ |
| ຈຳນວນບົດ | ໓໔ ບົດ |
| ຜູ້ຂຽນ | ທ່ານໂມເຊ |

໑. ຄຳນຳ

ເນື້ອຄວາມ ໃນ ໜັງສື ນີ້ ແມ່ນ ຄຳຕັກເຕີນ ຄັ້ງສຸດທ້າຍ ຂອງ ທ່ານໂມເຊ ເພາະເພິ່ນມີອາຍຸໄດ້ ໑໒໐ ປີແລ້ວ ແລະທ່ານໂມເຊຮູ້ວ່າ ເພິ່ນຈະບໍ່ເຂົ້າໄປໃນແຜ່ນດິນການາອານກັບພວກອິສຣາເອັນ ຊຶ່ງຄົນພວກນີ້ໄດ້ຢູ່ໃນປ່າດິນຊາຍເຖິງ ໔໐ ປີ ຄືຕັ້ງແຕ່ສໄມທ່ານໂມເຊສອນພຣະບັນຍັດ ໑໐ ປະການໃຫ້ພວກເຂົານັ້ນ ຈົນພວກທີ່ອອກຈາກປະເທດເອຢິບໄດ້ຕາຍໄປໝົດດ້ວຍວ່າພວກເຂົາບໍ່ເຊື່ອຟັງຄວາມຂອງພຣະເຈົ້າ ສນັ້ນໃນຄັ້ງສຸດທ້າຍທ່ານໂມເຊຈຶ່ງແຈ້ງຄວາມຊ່ວຍເຫລືອກັບຄຳສອນ ຂອງ ພຣະເຈົ້າໃຫ້ ພວກໃໝ່ຊາບ.

ອັນນຶ່ງ ເຫັນວ່າ ໜັງສືນີ້ ສຳຄັນຫລາຍຈົນ ພວກອິສຣາເອັນໄດ້ ຣ່ຳຮຽນແລະທ່ອງຂຶ້ນໃຈ ກັບທັງໄດ້ບອກສອນລູກຫລານຂອງຕົນທຸກ ໆ ເວລາດ້ວຍ (ບົດ ໖:໖-໙; ໑໑:໑໘-໒໑) ເມື່ອເຖິງເຈັດປີພວກເຂົາ

ມີງານເທສການຢູ່ຕູບພັກໄມ້ຄັ້ງນຶ່ງ ໃນໂອກາດນີ້ພວກເຂົາໄດ້ອ່ານໜັງສືນີ້ໃຫ້ທຸກ ໆ ຄົນຟັງ (ບົດທີ ໓໑:໙-໑໓) ແລະເມື່ອພະຍາມານມາທົດ-ລອງພຣະເຢຊູ ພຣະອົງກໍຊົງອ້າງອີງເອົາຂໍ້ຄວາມນີ້ ສໍາລັບໂຕ້ຕອບ (ມັດທາຍ ໔:໑-໑໐, ພຣະບັນຍັດ ໘:໓; ໖:໑໖)

## ໖. ເນື້ອຄວາມ

໑. ໃຫ້ເຝົ້າຣະວັງຢູ່ (ບົດ ໔:໑໕,໑໙,໒໓)

໒. ໃຫ້ປະພຶດປະຕິບັດຕາມຄວາມສັ່ງສອນຂອງພຣະອົງ ແລະໃຫ້ສັ່ງສອນລູກຫລານຂອງຕົນ (ບົດ ທີ ໖)

໓. ໃຫ້ລະນຶກເຖິງຄຸນງາມຄວາມດີຂອງພຣະອົງ (໘:໒,໑໘,໒໔:໑໘)

໔. ມີຄໍາວ່າ "ຈົ່ງຟັງເຖີ້ນ" ຢູ່ ໒໐ ເທື່ອ

໕. ມີຄໍາໃຫ້ພອນແກ່ຜູ້ທີ່ເຊື່ອຟັງ ແລະ ມີຄໍາດ່າແກ່ຜູ້ທີ່ລະເມີດ (໒໘:໑-໑໔;໓໐:໑໕-໑໙)

໖. ໃນໜັງສືນີ້ກໍມີເຣື່ອງຄວາມຮັກຂອງພຣະເຈົ້າຄືພຣະເຈົ້າ ຊົງກະທໍາທຸກສິ່ງສໍາລັບພວກເຮົາດ້ວຍຄວາມຮັກນັ້ນ (ບົດ ໔:໓໗;໗:໗-໘)

## ໗. ການແບ່ງເປັນພາກ

ພາກທີ ໑ ການທ່ອງທ່ຽວໄປມາໃນປ່າດິນຊາຍ ບົດ ໑-໔

ພາກທີ ໔ ພຣະບັນຍັດ ໑໐ ຂໍ້ (ບົດ ໕)
ແລະຄວາມເຕືອນໃຈ ບົດ ໕–໑໑
„ ໑ ກົດຣະບຽບແລະກົດໝາຍຕ່າງ ໆ ບົດ ໑໔–໒໖
„ ໕ ພຣະພອນແລະການຖືກດ່າ ບົດ ໒໗–໓໐
„ ໒ ຄວາມສຸດທ້າຍ ບົດ ໓໐–໓໔